# ສາລະບານ


ມະຕິຕົກລົງ ........................................ 5
ລັດຖະດຳລັດ ........................................ 6
ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ........................................ 7
ຄຳນຳ ........................................ 7
ໝວດທີ I ລະບອບການເມືອງ ........................................ 8
ມາດຕາ 1. ........................................ 8
ມາດຕາ 2. ........................................ 8
ມາດຕາ 3. ........................................ 8
ມາດຕາ 4(ໃໝ່). ........................................ 8
ມາດຕາ 5. ........................................ 9
ມາດຕາ 6. ........................................ 9
ມາດຕາ 7. ........................................ 9
ມາດຕາ 8. ........................................ 9
ມາດຕາ 9 (ໃໝ່). ........................................ 9
ມາດຕາ 10 (ໃໝ່). ........................................ 10
ມາດຕາ 11 (ໃໝ່). ........................................ 10
ມາດຕາ 12. ........................................ 10
ໝວດທີ II ລະບອບເສດຖະກິດ ແລະສັງຄົມ ........................................ 10
ມາດຕາ 13 (ໃໝ່). ........................................ 10
ມາດຕາ 14 (ໃໝ່). ........................................ 11
ມາດຕາ 16. ........................................ 11
ມາດຕາ 17(ໃໝ່). ........................................ 11
ມາດຕາ 18(ໃໝ່). ........................................ 11
ມາດຕາ 19. ........................................ 12
ມາດຕາ 20(ໃໝ່). ........................................ 12
ມາດຕາ 21(ໃໝ່). ........................................ 12
ມາດຕາ 22(ໃໝ່). ........................................ 12
ມາດຕາ 23(ໃໝ່). ........................................ 12
ມາດຕາ 24(ໃໝ່). ........................................ 13
ມາດຕາ 25(ໃໝ່). ........................................ 13
ມາດຕາ 26(ໃໝ່). ........................................ 13

ມາດຕາ 27 (ໃໝ່). .......................................................................................... 13
ມາດຕາ 28(ໃໝ່). ............................................................................................ 14
ມາດຕາ 29 (ໃໝ່). .......................................................................................... 14
ມາດຕາ 30(ໃໝ່). ............................................................................................ 14
ໝວດທີ III ( ໃໝ່ ) ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ........................................ 14
ມາດຕາ 31(ໃໝ່). ............................................................................................ 14
ມາດຕາ 32(ໃໝ່). ............................................................................................ 14
ມາດຕາ 33 (ໃໝ່). .......................................................................................... 15
ໝວດທີ IV ສິດ ແລະພັນທະພື້ນຖານຂອງພົນລະເມືອງ................................................. 15
ມາດຕາ 34. ................................................................................................... 15
ມາດຕາ 35. ................................................................................................... 15
ມາດຕາ 36(ໃໝ່). ............................................................................................ 15
ມາດຕາ 37. ................................................................................................... 16
ມາດຕາ 38. ................................................................................................... 16
ມາດຕາ 39(ໃໝ່). ............................................................................................ 16
ມາດຕາ 40. ................................................................................................... 16
ມາດຕາ 41(ໃໝ່). ............................................................................................ 16
ມາດຕາ 42(ໃໝ່). ............................................................................................ 16
ມາດຕາ 43. ................................................................................................... 16
ມາດຕາ 44. ................................................................................................... 16
ມາດຕາ 45. ................................................................................................... 17
ມາດຕາ 46. ................................................................................................... 17
ມາດຕາ 47. ................................................................................................... 17
ມາດຕາ 48. ................................................................................................... 17
ມາດຕາ 49. ................................................................................................... 17
ມາດຕາ 50. ................................................................................................... 17
ມາດຕາ 51. ................................................................................................... 17
ໝວດທີ V ສະພາແຫ່ງຊາດ ................................................................................. 17
ມາດຕາ 52(ໃໝ່). ............................................................................................ 18
ມາດຕາ 53 (ໃໝ່). .......................................................................................... 18
ມາດຕາ 54(ໃໝ່). ............................................................................................ 19
ມາດຕາ 55. ................................................................................................... 19

ມາດຕາ 56(ໃໝ່). ..... 19
ມາດຕາ 57. ..... 20
ມາດຕາ 58. ..... 20
ມາດຕາ 59 (ໃໝ່). ..... 20
ມາດຕາ 60. ..... 20
ມາດຕາ 61. ..... 20
ມາດຕາ 62(ໃໝ່). ..... 21
ມາດຕາ 63(ໃໝ່). ..... 21
ມາດຕາ 64. ..... 21
ໝວດທີ VI ປະທານປະເທດ ..... 21
ມາດຕາ 65. ..... 21
ມາດຕາ 66(ໃໝ່). ..... 21
ມາດຕາ 67(ໃໝ່). ..... 22
ມາດຕາ 68(ໃໝ່). ..... 22
ໝວດທີ VII ລັດຖະບານ ..... 23
ມາດຕາ 69 ..... 23
ມາດຕາ 70 (ໃໝ່). ..... 23
ມາດຕາ 71 (ໃໝ່). ..... 24
ມາດຕາ 72 (ໃໝ່). ..... 24
ມາດຕາ 73 (ໃໝ່). ..... 24
ມາດຕາ 74(ໃໝ່). ..... 24
ໝວດທີ VIII ການປົກຄອງທ້ອງຖິ່ນ ..... 25
ມາດຕາ 75 (ໃໝ່). ..... 25
ມາດຕາ 76(ໃໝ່). ..... 25
ມາດຕາ 77(ໃໝ່). ..... 25
ມາດຕາ 78. ..... 26
ໝວດທີ IX ສານປະຊາຊົນ ແລະອົງການໄອຍະການປະຊາຊົນ ..... 26
ມາດຕາ 79 (ໃໝ່). ..... 26
ມາດຕາ 80(ໃໝ່). ..... 26
ມາດຕາ 81(ໃໝ່). ..... 26
ມາດຕາ 82. ..... 26
ມາດຕາ 83. ..... 27

ມາດຕາ 84.......................................................................................................27
ມາດຕາ 85(ໃໝ່)..................................................................................................27
ມາດຕາ 86(ໃໝ່)..................................................................................................27
ມາດຕາ 87(ໃໝ່)..................................................................................................28
ມາດຕາ 88(ໃໝ່)..................................................................................................28
ໝວດທີ X ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ , ວັນຊາດ, ສະກຸນເງິນ ແລະນະຄອນຫລວງ..................................................................................................28
ມາດຕາ 89.......................................................................................................28
ມາດຕາ 90.......................................................................................................28
ມາດຕາ 91.......................................................................................................28
ມາດຕາ 92.......................................................................................................28
ມາດຕາ 93(ໃໝ່)..................................................................................................29
ມາດຕາ 94(ໃໝ່)..................................................................................................29
ມາດຕາ 95.......................................................................................................29
ໝວດທີ XI ບົດບັນຍັດສຸດທ້າຍ..................................................................................29
ມາດຕາ 96(ໃໝ່)..................................................................................................29
ມາດຕາ 97.......................................................................................................29
ມາດຕາ 98 (ໃໝ່).................................................................................................29

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 25 / ສພຊ

**ມະຕິຕົກລົງ**

# ຂອງ
# ສະພາແຫ່ງຊາດ ແຫ່ງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ກ່ຽວກັບການຕົກລົງຮັບຮອງເອົາລັດຖະທຳມະນູນ ແຫ່ງ
# ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບປັບປຸງ

ອີງຕາມມາດຕາ 40 ຂໍ້ 1 ຂອງລັດຖະທຳມະນູນ ແລະມາດຕາ 2 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ພາຍຫລັງທີ່ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງກ່ຽວກັບເນື້ອໃນການປັບ ປຸງລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ V, ໃນວາລະປະຊຸມຕອນບ່າຍ ຂອງວັນທີ 6 ພຶດສະພາ 2003.

## ກອງປະຊຸມໄດ້ຕົກລົງ:

**ມາດຕາ 1:** ຮັບຮອງເອົາລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ດ້ວຍຄະແນນສຽງເປັນເອກະສັນ.

**ມາດຕາ 2:** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 6 ພຶດສະພາ 2003

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ເລກທີ 32 /ສປປ

ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ລັດຖະທຳມະນູນແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 1 ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 25 /ສພຊ, ລົງວັນທີ 6 ພຶດສະພາ 2003 ກ່ຽວກັບການຮັບຮອງເອົາລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ ຄປຈ, ລົງວັນທີ 9 ພຶດສະພາ 2003.

**ປະທານປະເທດ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດ:**

**ມາດຕາ 1:** ປະກາດໃຊ້ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ.

**ມາດຕາ 2:** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 28 ພຶດສະພາ 2003

ປະທານປະເທດແຫ່ງ ສປປລາວ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

## ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ຄຳນຳ

ນັບເປັນເວລາຫລາຍພັນປີມາແລ້ວ ທີ່ບັນດາບັນພະບູລຸດຂອງຊາດລາວ ໄດ້ພ້ອມກັບປະຊາຊົນລາວບັນດາເຜົ່າ ດຳເນີນການຕໍ່ສູ້ເພື່ອການດຳລົງຄົງຕົວ ແລະຂະຫຍາຍຕົວຢູ່ບົນດິນແດນອັນແສນຮັກແຫ່ງນີ້. ເລີ່ມແຕ່ກາງສະຕະວັດທີ່ສິບສີ່ເປັນຕົ້ນມາ, ບັນພະບູລຸດຂອງພວກເຮົາ ໂດຍສະ ເພາະເຈົ້າຟ້າງຸ່ມ ໄດ້ພາປະຊາຊົນເຮົາກໍ່ຕັ້ງ ແລະສ້າງປະເທດລ້ານຊ້າງໃຫ້ເປັນເອກະພາບ ແລະຈະເລີນຮຸ່ງເຮືອງ.

ຕັ້ງແຕ່ສະຕະວັດທີສິບແປດເປັນຕົ້ນມາ, ແຜ່ນດິນລາວໄດ້ຖືກບັນດາອິດທິກຳລັງພາຍນອກຈ້ອງມອງ ແລະຮຸກຮານຢູ່ສະເໝີ. ປະຊາຊົນເຮົາໄດ້ພ້ອມກັນເສີມຂະຫຍາຍມູນເຊື້ອອັນພິລະອາດຫານ ບໍ່ຍອມຈຳນົນຂອງບັນພະບູລຸດ ແລະໄດ້ຕໍ່ສູ້ຢ່າງຕໍ່ເນື່ອງ, ໜຽວແໜ້ນ ເພື່ອກອບກູ້ເອກະລາດ, ອິດສະລະພາບ.

ນັບແຕ່ປີ 1930 ເປັນຕົ້ນມາ ພາຍໃຕ້ການນຳພາອັນຖືກຕ້ອງຂອງພັກກອມມູນິດອິນດູຈີນໃນເມື່ອກ່ອນ ແລະພັກປະຊາຊົນປະຕິວັດລາວໃນປັດຈຸບັນ, ປະຊາຊົນລາວບັນດາເຜົ່າໄດ້ດຳເນີນການຕໍ່ສູ້ອັນຫຍຸ້ງຍາກລຳບາກ, ພິລະອາດຫານທີ່ເຕັມໄປດ້ວຍຄວາມເສຍສະລະ ຈົນສາມາດທັບມ້າງແອກຄອບຄອງ, ການກົດຂີ່ຂອງພວກລ່າເມືອງຂຶ້ນ ແລະລະບອບສັກດີນາ, ປົດປ່ອຍປະເທດ ຊາດຢ່າງສົມບູນ, ສ້າງຕັ້ງປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ເດືອນ ທັນວາ ປີ 1975, ອັນໄດ້ໄຂສັງກາດໃໝ່, ສັງກາດທີ່ປະເທດຊາດມີເອກະລາດ ແລະປະຊາ ຊົນໄດ້ມີອິດສະລະພາບຢ່າງແທ້ຈິງ.

ພາຍຫລັງທີ່ປະເທດຊາດໄດ້ຮັບການປົດປ່ອຍມານີ້ ປະຊາຊົນເຮົາໄດ້ພ້ອມກັນປະຕິບັດສອງ ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະສ້າງສາປະເທດຊາດ ໂດຍສະເພາະແມ່ນການດຳເນີນພາລະກິດປ່ຽນແປງໃໝ່ ເພື່ອຂຸດຄົ້ນ ແລະເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ເຂົ້າໃນການ ສ້າງ ແລະບູລະນະລະບອບປະຊາທິປະໄຕປະຊາຊົນ, ສ້າງປະຖົມປັດໃຈກ້າວຂຶ້ນສູ່ລະບອບສັງຄົມ ນິຍົມ.

ມາໃນໄລຍະໃຫມ່ນີ້ ຊີວິດຂອງສັງຄົມໄດ້ຮຽກຮ້ອງໃຫ້ລັດເຮົາຕ້ອງມີລັດຖະທຳມະນູນ. ລັດ ຖະທຳມະນູນນີ້ ແມ່ນລັດຖະທຳມະນູນຂອງລະບອບປະຊາທິປະໄຕປະຊາຊົນຢູ່ປະເທດເຮົາ ຊຶ່ງໄດ້ ຮັບຮູ້ຜົນງານອັນ

ຍິ່ງໃຫຍ່ທີ່ປະຊາຊົນເຮົາຍາດມາໄດ້ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະສ້າງສາປະເທດຊາດ; ກຳນົດລະບອບການເມືອງ, ເສດຖະກິດ-ສັງຄົມ, ການປ້ອງກັນຊາດ- ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ກຳນົດສິດ ແລະພັນທະພື້ນຖານຂອງພົນລະເມືອງ, ລະບົບການຈັດຕັ້ງ ກົງຈັກລັດໃນໄລຍະໃໝ່. ໃນປະຫວັດສາດຂອງຊາດເຮົາ ເທື່ອນີ້ເປັນເທື່ອທຳອິດ ທີ່ໄດ້ກຳນົດສິດເປັນເຈົ້າຂອງປະຊາຊົນ ຢູ່ໃນກົດໝາຍພື້ນຖານຂອງຊາດ.

ລັດຖະທຳມະນູນສະບັບນີ້ ແມ່ນໝາກຜົນລວມຍອດແຫ່ງສະຕິປັນຍາ ແລະການປະກອບ ຄວາມເຫັນຂອງປະຊາຊົນໃນທົ່ວປະເທດ ທີ່ສ່ອງແສງເຖິງເຈດຈຳນົງອັນຍາວນານ ແລະຄວາມຕັດສິນໃຈຢ່າງແຮງກ້າຂອງວົງຄະນະຍາດແຫ່ງຊາດ ທີ່ຈະພ້ອມກັນສູ້ຊົນຈົນບັນລຸຈຸດໝາຍ ສ້າງປະເທດລາວໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະວັດທະນະຖາ ວອນ.

## ໝວດທີ I ລະບອບການເມືອງ

**ມາດຕາ 1.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດເອກະລາດ, ມີອຳນາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນ ລວມທັງເຂດນ່ານນ້ຳ ແລະນ່ານຟ້າ; ເປັນປະເທດເອກະພາບຂອງທຸກຊົນເຜົ່າ ທີ່ຕັດແຍກອອກຈາກກັນບໍ່ໄດ້.

**ມາດຕາ 2.**

ລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນລັດປະຊາທິປະໄຕປະ ຊາຊົນ. ອຳນາດທັງໝົດ ເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອຜົນປະໂຫຍດຂອງປະຊາ ຊົນບັນດາເຜົ່າ ຊຶ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ ແລະນັກຮຽນຮູ້ປັນຍາຊົນເປັນຫລັກແຫລ່ງ.

**ມາດຕາ 3.**

ສິດເປັນເຈົ້າປະເທດຊາດ ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປະຕິບັດ ແລະຮັບປະກັນດ້ວຍການເຄື່ອນໄຫວຂອງລະບົບການເມືອງ ຊຶ່ງມີພັກປະຊາຊົນປະຕິວັດລາວເປັນແກນນຳ.

**ມາດຕາ 4(ໃໝ່).**

ປະຊາຊົນເປັນຜູ້ສ້າງຕັ້ງອົງການຕົວແທນແຫ່ງສິດອຳນາດ ແລະຜົນປະໂຫຍດຂອງຕົນ ຊຶ່ງມີຊື່ວ່າ ສະພາແຫ່ງຊາດ.

**ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແມ່ນປະຕິບັດຕາມຫລັກການທົ່ວໄປ, ສະເໝີພາບ, ໂດຍກົງ ແລະລົງຄະແນນສຽງປິດລັບ.**

ຜູ້ປ່ອນບັດເລືອກຕັ້ງມີສິດສະເໜີປົດຜູ້ແທນຂອງຕົນໄດ້ ຖ້າຫາກເຫັນວ່າມີການປະພຶດຕົນ ບໍ່ສົມກຽດສັກສີ ແລະຂາດຄວາມໄວ້ວາງໃຈຈາກປະຊາຊົນ.

**ມາດຕາ 5.**

ສະພາແຫ່ງຊາດ ແລະທຸກອົງການຂອງລັດໄດ້ຮັບການຈັດຕັ້ງ ແລະເຄື່ອນໄຫວຕາມຫລັກການລວມສູນປະຊາທິປະໄຕ.

**ມາດຕາ 6.**

ລັດປົກປ້ອງສິດອິດສະລະພາບ ແລະສິດປະຊາທິປະໄຕຂອງປະຊາຊົນ ທີ່ບໍ່ມີໃຜຈະລ່ວງລະເມີດໄດ້. ທຸກອົງການ ແລະພະນັກງານຂອງລັດ ຕ້ອງໂຄສະນາອົບຮົມບັນດານະໂຍບາຍ ແລະລະບຽບກົດໝາຍໃຫ້ປະຊາຊົນ ແລະພ້ອມກັນຈັດຕັ້ງປະຕິບັດ ເພື່ອຮັບປະກັນສິດ ແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນ. ຫ້າມທຸກການກະທຳແບບອາດຍາສິດ, ຂົ່ມຂູ່ ອັນຈະກໍ່ຄວາມ ເສຍຫາຍ ເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະຊັບສົມບັດຂອງປະຊາຊົນ.

**ມາດຕາ 7.**

ແນວລາວສ້າງຊາດ, ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິ ວັດລາວ, ສະຫະພັນແມ່ຍິງລາວ ແລະບັນດາອົງການຈັດຕັ້ງສັງຄົມ ເປັນບ່ອນເຕົ້າໂຮມຄວາມສາ ມັກຄີ ແລະປຸກລະດົມບັນດາຊັ້ນຄົນຂອງທຸກຊົນເຜົ່າເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ປົກປັກຮັກສາສິດ ແລະຜົນປະໂຫຍດ ອັນຊອບທຳຂອງສະມາຊິກໃນອົງການຈັດຕັ້ງຂອງຕົນ.

**ມາດຕາ 8.**

ລັດປະຕິບັດນະໂຍບາຍສາມັກຄີ ແລະສະເໝີພາບລະຫວ່າງຊົນເຜົ່າຕ່າງໆ. ທຸກຊົນເຜົ່າລ້ວນແຕ່ມີສິດປົກປັກຮັກສາ, ເສີມຂະຫຍາຍຮີດຄອງປະເພນີ ແລະວັດທະນະທຳອັນດີງາມຂອງຕົນ ແລະຂອງຊາດ. ຫ້າມທຸກການກະທຳແບ່ງແຍກ ແລະການປະພຶດຈຳແນກລະຫວ່າງຊົນເຜົ່າ.

ລັດປະຕິບັດທຸກມາດຕະການເພື່ອຂະຫຍາຍ ແລະຍົກລະດັບເສດຖະກິດ-ສັງຄົມຂອງທຸກຊົນເຜົ່າໃຫ້ສູງຂຶ້ນ.

**ມາດຕາ 9 (ໃໝ່).**

ລັດເຄົາລົບ ແລະປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສາສະ ນິກະຊົນ ແລະ ສາສະນິກະຊົນອື່ນ. ປຸກລະດົມສົ່ງເສີມພະພິກຂຸສາມະເນນ ແລະນັກບວດຂອງສາສະ ໜາໃຫ້ເຂົ້າຮ່ວມໃນການເຄື່ອນໄຫວທີ່ເປັນປະໂຫຍດແກ່ປະເທດຊາດ ແລະປະຊາຊົນ. ຫ້າມທຸກ ການກະທຳທີ່ເປັນການແບ່ງແຍກສາສະໜາ, ແບ່ງແຍກປະຊາຊົນ.

**ມາດຕາ 10 (ໃໝ່).**

ລັດຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະກົດໝາຍ. ອົງການຈັດຕັ້ງ ຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະພົນລະເມືອງທຸກຄົນຕ້ອງເຄົາລົບ ແລະປະຕິບັດລັດຖະທຳມະນູນ ແລະກົດໝາຍຢ່າງເຂັ້ມງວດ.

**ມາດຕາ 11 (ໃໝ່).**

ລັດປະຕິບັດແນວທາງ, ນະໂຍບາຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ ແລະຮອບດ້ານ; ປັບປຸງ ແລະກໍ່ສ້າງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ເຂັ້ມ ແຂງ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະຕໍ່ປະຊາຊົນ, ມີຄວາມສາມາດປະຕິບັດໜ້າທີ່ປົກປັກຮັກສາໝາກຜົນຂອງການປະຕິວັດ, ຊີວິດ, ຊັບສິນ ແລະການອອກແຮງງານຂອງປະຊາຊົນ; ປະ ກອບສ່ວນເຂົ້າໃນພາລະກິດພັດທະນາປະເທດຊາດໃຫ້ຮັ່ງມີເຂັ້ມແຂງ.

**ມາດຕາ 12.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະການຮ່ວມມື; ຂະຫຍາຍສາຍພົວພັນ ແລະການຮ່ວມມືກັບທຸກປະເທດ ບົນຫລັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະໜັບສະໜູນການຕໍ່ສູ້ຂອງປະຊາຊົນໃນໂລກ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະຄວາມກ້າວໜ້າທາງສັງຄົມ.

## ໝວດທີ II ລະບອບເສດຖະກິດ ແລະສັງຄົມ

**ມາດຕາ 13 (ໃໝ່).**

ເສດຖະກິດແຫ່ງຊາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເສດຖະກິດຫລາຍພາກສ່ວນ ທີ່ຄົງຕົວຢ່າງຍາວນານ ຊຶ່ງລ້ວນແຕ່ໄດ້ຮັບການສົ່ງເສີມ ເພື່ອຂະ ຫຍາຍກຳລັງການຜະລິດ, ເປີດກວ້າງການຜະລິດ, ທຸລະກິດ ແລະການບໍລິການ, ຫັນເສດຖະກິດ ທຳມະຊາດໄປສູ່ເສດຖະກິດສິນຄ້າ, ປະຕິບັດການຫັນເປັນອຸດສາຫະກຳ ແລະການຫັນເປັນທັນສະໄໝ; ເຊື່ອມໂຍງ

ກັບເສດຖະກິດຂອງພາກພື້ນ ແລະຂອງໂລກ, ເຮັດໃຫ້ເສດຖະກິດແຫ່ງຊາດ ມີສະຖຽນລະພາບ ແລະຂະຫຍາຍ ຕົວຢ່າງຕໍ່ເນື່ອງ, ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈຂອງປະຊາຊົນ ໃຫ້ສູງຂຶ້ນ.

ທຸກພາກສ່ວນເສດຖະກິດ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະເຄື່ອນໄຫວຕາມກົນໄກເສດຖະກິດຕະຫລາດ, ທັງແຂ່ງຂັນແລະຮ່ວມມືກັນ ຂະຫຍາຍການຜະລິດ, ທຸລະກິດພາຍໃຕ້ການດັດສົມຂອງລັດຕາມທິດສັງຄົມນິຍົມ.

**ມາດຕາ 14 (ໃໝ່).**

ລັດ ສົ່ງເສີມທຸກພາກສ່ວນເສດຖະກິດພາຍໃນປະເທດ ລົງທຶນເຂົ້າໃນການ ຜະລິດ, ທຸລະກິດ ແລະການບໍລິການ, ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະການ ຫັນເປັນທັນສະໄໝ, ເຮັດໃຫ້ເສດຖະກິດແຫ່ງຊາດເຕີບໃຫຍ່ເຂັ້ມແຂງ.

**ມາດຕາ 15 (ໃໝ່).**

ລັດ ສົ່ງເສີມການລົງທຶນຂອງຕ່າງປະເທດຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສ້າງສິ່ງແວດລ້ອມອຳນວຍຄວາມສະດວກໃຫ້ແກ່ການນຳເອົາທຶນ, ເຕັກໂນໂລຢີ ແລະ ການຄຸ້ມຄອງທີ່ກ້າວໜ້າ ເຂົ້າສູ່ຂະບວນການຜະລິດ, ທຸລະກິດ ແລະການບໍລິການ.

ຊັບສົມບັດ ແລະທຶນທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະບໍ່ຖືກເກັບເກນ, ບໍ່ຖືກຍຶດ ຫລືໂອນເປັນຂອງລັດ.

**ມາດຕາ 16.**

ລັດປົກປ້ອງ ແລະເສີມຂະຫຍາຍບັນດາຮູບການກຳມະສິດຂອງລັດ, ຂອງລວມໝູ່, ເອກະເທດ, ເອກະຊົນພາຍໃນ ແລະຕ່າງປະເທດທີ່ລົງທຶນຢູ່ ສາທາລະນະລັດ ປະຊາທິປະໄຕ ປະ ຊາຊົນລາວ.

**ມາດຕາ 17(ໃໝ່).**

ລັດປົກປ້ອງສິດກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບ ໝາກຜົນ, ສິດຊີ້ຂາດ) ແລະສິດສືບທອດຊັບສົມບັດຂອງການຈັດຕັ້ງ ແລະຂອງບຸກຄົນ. ສຳລັບທີ່ດິນແມ່ນເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ, ລັດຮັບປະກັນສິດນຳໃຊ້, ສິດໂອນ ແລະສິດສືບທອດຕາມກົດໝາຍ.

**ມາດຕາ 18(ໃໝ່).**

ລັດຄຸ້ມຄອງເສດຖະກິດ ຕາມກົນໄກເສດຖະກິດຕະຫລາດທີ່ມີການຄົ້ມຄອງຂອງລັດ, ປະຕິບັດຫລັກການສົມທົບການຄຸ້ມຄອງລວມສູນ ເປັນເອກະພາບຂອງຂະແໜງການສູນກາງກັບການແບ່ງຄວາມຮັບຜິດຊອບຄຸ້ມຄອງໃຫ້ທ້ອງຖິ່ນ ຕາມລະບຽບກົດໝາຍ.

**ມາດຕາ 19.**

ທຸກອົງການຈັດຕັ້ງ ແລະພົນລະເມືອງທຸກຄົນ ຕ້ອງປົກປັກຮັກສາສິ່ງແວດລ້ອມ, ປົກປັກຮັກສາຊັບພະຍາກອນທຳມະຊາດ: ໜ້າດິນ, ພື້ນດິນ, ປ່າໄມ້, ສັດ, ແຫລ່ງນ້ຳ ແລະອາກາດ.

**ມາດຕາ 20(ໃໝ່).**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຕິບັດນະໂຍບາຍເປີດ ກວ້າງການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ ໂດຍນຳໃຊ້ຮູບການສຳພັນ ເສດຖະກິດແບບຫລາຍທິດ, ຫລາຍ ຝ່າຍ, ຫລາຍຮູບແບບ ບົນຫລັກການເຄົາລົບເອກະລາດ, ອະທິປະໄຕ ຂອງກັນ, ສະເໝີພາບ ແລະຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 21(ໃໝ່).**

ລັດໃຫ້ຄວາມສຳຄັນ ແກ່ການພັດທະນາເສດຖະກິດ ຕິດພັນກັບການພັດທະນາ ວັດທະນະທຳ-ສັງຄົມ ໂດຍໃຫ້ບູລິມະສິດແກ່ການພັດທະນາຊັບພະຍາກອນມະນຸດ.

**ມາດຕາ 22(ໃໝ່).**

ລັດເອົາໃຈໃສ່ປະຕິບັດນະໂຍບາຍພັດທະນາການສຶກສາ, ປະຕິບັດລະບອບ ການສຶກສາຊັ້ນປະຖົມແບບບັງຄັບ ເພື່ອສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດສິນທຳ ປະຕິວັດ, ມີຄວາມຮູ້ ແລະຄວາມສາມາດ.

ລັດ ແລະທົ່ວສັງຄົມ ຕັ້ງຫນ້າພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ສ້າງໂອ ກາດ ແລະເງື່ອນໄຂໃຫ້ປະຊາຊົນໄດ້ຮັບການສຶກສາຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນທີ່ຢູ່ເຂດຫ່າງໄກສອກຫລີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ ແລະຜູ້ດ້ອຍໂອກາດ.

ລັດສົ່ງເສີມ ແລະຊຸກຍູ້ໃຫ້ເອກະຊົນລົງທຶນເຂົ້າໃນການພັດທະນາການສຶກສາແຫ່ງຊາດຕາມກົດໝາຍ.

**ມາດຕາ 23(ໃໝ່).**

ລັດສົ່ງເສີມການອະນຸລັກວັດທະນະທຳ ທີ່ເປັນເອກະລັກ ແລະເປັນມູນເຊື້ອອັນ ດີງາມຂອງຊາດ ແລະຂອງຊົນເຜົ່າ ສົມທົບກັບການຮັບເອົາວັດທະນະທຳທີ່ກ້າວໜ້າຂອງໂລກຢ່າງ ມີການເລືອກເຟັ້ນ.

ລັດສົ່ງເສີມການເຄື່ອນໄຫວວັດທະນະທຳ, ສິນລະປະວັນນະຄະດີ, ການປະດິດຄິດແຕ່ງ, ຄຸ້ມຄອງ ແລະປົກປັກຮັກສາມໍລະດົກທາງດ້ານວັດທະນະທຳ, ປະຫວັດສາດ ແລະທຳມະຊາດ, ບູລະນະປະຕິສັງຂອນວັດຖຸບູຮານ ແລະປູຊະນີຍະສະຖານ.

ລັດເອົາໃຈໃສ່ປັບປຸງ ແລະຂະຫຍາຍວຽກງານສື່ມວນຊົນ ເພື່ອຮັບໃຊ້ພາລະກິດປົກປັກຮັກ ສາ ແລະພັດທະນາປະເທດຊາດ.

ຫ້າມທຸກການເຄື່ອນໄຫວດ້ານວັດທະນະທຳ ຫລືນຳໃຊ້ສື່ມວນຊົນ ເພື່ອກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງຊາດ, ທຳລາຍຮີດຄອງປະເພນີອັນດີງາມ ຫລືກຽດສັກສີຂອງຄົນລາວ.

**ມາດຕາ 24(ໃໝ່).**

ລັດເອົາໃຈໃສ່ສົ່ງເສີມສະຕິປັນຍາ ແລະຫົວຄິດປະດິດສ້າງໃນວຽກງານການ ຄົ້ນຄວ້າ ແລະການນຳໃຊ້ວິທະຍາສາດ-ເຕັກໂນໂລຢີ, ປົກປ້ອງຊັບສິນທາງປັນຍາ ໄປຄຽງຄູ່ກັບ ການບຳລຸງ ແລະກໍ່ສ້າງນັກວິທະຍາສາດ ເພື່ອຊຸກຍູ້ການຫັນເປັນອຸດສາຫະກຳ ແລະການຫັນເປັນ ທັນສະໄໝ.

**ມາດຕາ 25(ໃໝ່).**

ລັດເອົາໃຈໃສ່ປັບປຸງ ແລະຂະຫຍາຍວຽກງານສາທາລະນະສຸກ ເພື່ອຮັກສາສຸຂະພາບຂອງປະຊາຊົນ.

ລັດ ແລະສັງຄົມຕັ້ງໜ້າກໍ່ສ້າງ ແລະປັບປຸງລະບົບການກັນພະຍາດ ແລະປິ່ນປົວຄົນເຈັບຢ່າງທົ່ວເຖິງ,ສ້າງເງື່ອນໄຂໃຫ້ປະຊາຊົນທຸກຄົນໄດ້ຮັບການເບິ່ງແຍງດ້ານສຸຂະພາບ ໂດຍສະເພາະແມ່ນແມ່ ແລະເດັກນ້ອຍ, ປະຊາຊົນຜູ້ທຸກຍາກ ແລະຜູ້ຢູ່ເຂດຫ່າງໄກສອກຫລີກ ເພື່ອໃຫ້ທຸກຄົນມີ ສຸຂະພາບດີ.

ລັດສົ່ງເສີມ ແລະຊຸກຍູ້ໃຫ້ເອກະຊົນລົງທຶນ ເປີດການບໍລິການດ້ານສາທາລະນະສຸກ ຕາມລະບຽບກົດໝາຍ.

ຫ້າມທຸກການບໍລິການດ້ານສາທາລະນະສຸກ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 26(ໃໝ່).**

ລັດ ແລະສັງຄົມເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະລົງທຶນເຂົ້າໃນການກິລາກາຍຍະກຳ ຂອງມະຫາຊົນ ນັບທັງປະເພດກິລາ ທີ່ເປັນມູນເຊື້ອອັນດີງາມຂອງເຜົ່າຕ່າງໆ ແລະກິລາສາກົນ ເພື່ອຍົກລະດັບຄວາມສາມາດດ້ານການກິລາໃຫ້ສູງຂຶ້ນ, ເສີມສ້າງກຳລັງ ແລະສຸຂະພາບຂອງປະຊາຊົນ.

**ມາດຕາ 27 (ໃໝ່).**

ລັດ ແລະສັງຄົມເອົາໃຈໃສ່ພັດທະນາສີມືແຮງງານ; ຍົກສູງວິໄນແຮງງານ, ສົ່ງເສີມວິຊາຊີບ ແລະວຽກເຮັດງານທຳຂອງປະຊາຊົນ; ປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ.

**ມາດຕາ 28(ໃໝ່).**

ລັດ ແລະສັງຄົມເອົາໃຈໃສ່ປະຕິບັດນະໂຍບາຍສະຫວັດດີການສັງຄົມເປັນຢ່າງ ດີ ໂດຍສະເພາະຕໍ່ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບໍານານ, ຜູ້ເສຍອົງຄະ, ຄອບຄົວຜູ້ເສຍສະລະຊີວິດ ເພື່ອພາລະກິດປະຕິວັດ ແລະຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ.

**ມາດຕາ 29 (ໃໝ່).**

ລັດ, ສັງຄົມ ແລະຄອບຄົວເອົາໃຈໃສ່ປະຕິບັດນະໂຍບາຍພັດທະນາ ແລະສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ປົກປ້ອງສິດ ແລະຜົນປະໂຫຍດຂອງແມ່ຍິງ ແລະເດັກນ້ອຍ.

**ມາດຕາ 30(ໃໝ່).**

ລັດ ແລະສັງຄົມສົ່ງເສີມ, ພັດທະນາ ແລະເປີດກວ້າງການທ່ອງທ່ຽວວັດທະນະທໍາ, ປະຫວັດສາດ ແລະທໍາມະຊາດ.

ຫ້າມການທ່ອງທ່ຽວ ທີ່ຈະສ້າງຄວາມເສື່ອມເສຍຕໍ່ວັດທະນະທໍາອັນດີງາມຂອງຊາດ ຫລືຂັດກັບລະບຽບກົດໝາຍ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ໝວດທີ III ( ໃໝ່ ) ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

**ມາດຕາ 31(ໃໝ່).**

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນໜ້າທີ່ຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ, ເປັນພັນທະຂອງທຸກການຈັດຕັ້ງ ແລະພົນລະເມືອງລາວທຸກຄົນ ໃນ ການປົກປັກຮັກສາຄວາມເປັນເອກະລາດ, ອໍານາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງ ປະເທດຊາດ; ປົກປັກຮັກສາຊີວິດ ແລະຊັບສິນຂອງປະຊາຊົນ, ຮັບປະກັນສະຖຽນລະພາບ ແລະຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ.

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງສົມທົບແໜ້ນ ກັບການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 32(ໃໝ່).**

ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຕ້ອງເອົາໃຈໃສ່ປັບປຸງ ແລະກໍ່ສ້າງ ຕົນເອງໃຫ້ເຕີບໃຫຍ່ເຂັ້ມແຂງ, ເຊີດຊູຄວາມຈົງຮັກພັກດີຕໍ່ປະເທດຊາດ, ເປັນກຳລັງປະກອບອາວຸດ ຂອງປະຊາຊົນທີ່ມີທາດແທ້ປະຕິວັດ, ລະບຽບວິໄນເຂັ້ມງວດ ແລະມີແບບແຜນທັນສະໄໝ, ມີຄວາມສາມາດໃນການສູ້ຮົບສູງ; ເປັນກຳລັງຫລັກແຫລ່ງໃນການຮັກສາຄວາມໝັ້ນຄົງຂອງປະເທດ ຊາດ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ລັດເອົາໃຈໃສ່ປະກອບວັດຖຸອຸປະກອນ, ເຕັກນິກ, ເຕັກໂນໂລຢີ, ພາຫະນະ, ເຄື່ອງມື ແລະຍົກລະດັບຄວາມຮູ້, ຄວາມສາມາດ, ວິຊາສະເພາະ, ຍຸດທະສິນ ແລະຍຸດທະວິທີຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ສູງຂຶ້ນ.

**ມາດຕາ 33 (ໃໝ່).**

ລັດ ແລະສັງຄົມເອົາໃຈໃສ່ປະຕິບັດນະໂຍບາຍ, ເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈ ແລະປະຕິບັດນະໂຍບາຍແນວຫລັງຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ ເພື່ອເພີ່ມທະວີຄວາມສາມາດໃນການປະຕິບັດໜ້າທີ່ປົກປັກຮັກສາປະເທດຊາດ ແລະຮັກສາ ຄວາມສະຫງົບຂອງສັງຄົມ.

ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງເອົາໃຈໃສ່ຍົກສູງຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ, ອອກແຮງສ້າງພະລາທິການກັບທີ່ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ ແລະປະ ກອບສ່ວນໃນການສ້າງສາພັດທະນາປະເທດຊາດ.

## ໝວດທີ IV ສິດ ແລະພັນທະພື້ນຖານຂອງພົນລະເມືອງ

**ມາດຕາ 34.**

ພົນລະເມືອງລາວ ແມ່ນຜູ້ທີ່ມີສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 35.**

ພົນລະເມືອງລາວ ໂດຍບໍ່ຈຳແນກຍິງຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

**ມາດຕາ 36(ໃໝ່).**

ພົນລະເມືອງລາວຜູ້ທີ່ມີອາຍຸແຕ່ສິບແປດປີຂຶ້ນໄປ ມີສິດປ່ອນບັດເລືອກຕັ້ງ ແລະຜູ້ທີ່ມີອາຍຸແຕ່ຊາວເອັດປີຂຶ້ນໄປ ມີສິດສະໝັກຮັບເລືອກຕັ້ງ ເວັ້ນເສຍແຕ່ຜູ້ເປັນບ້າ, ເສຍຈິດ ແລະຜູ້ທີ່ຖືກສານຕັດສິນປົດສິດເລືອກຕັ້ງ ແລະສະໝັກຮັບເລືອກຕັ້ງ.

ມາດຕາ 37.

ພົນລະເມືອງລາວຍິງຊາຍ ມີສິດເທົ່າທຽມກັນ ໃນດ້ານການເມືອງ, ເສດຖະກິດ, ວັດ ທະນະທຳ-ສັງຄົມ ແລະຄອບຄົວ.

ມາດຕາ 38.

ພົນລະເມືອງລາວ ມີສິດໄດ້ຮັບການສຶກສາຮ່ຳຮຽນ, ຍົກສູງຄວາມກ້າວໜ້າ.

ມາດຕາ 39(ໃໝ່).

ພົນລະເມືອງລາວມີສິດເຮັດວຽກ ແລະປະກອບອາຊີບທີ່ບໍ່ຂັດກັບກົດໝາຍ. ຜູ້ອອກແຮງງານມີສິດໄດ້ຮັບການພັກຜ່ອນ, ໄດ້ຮັບການປິ່ນປົວໃນເວລາເຈັບເປັນ, ໄດ້ຮັບການຊ່ວຍເຫລືອໃນກໍລະນີທີ່ໝົດຄວາມສາມາດອອກແຮງງານ, ເສຍອົງຄະ, ໃນເວລາເຖົ້າແກ່ ແລະໃນກໍລະນີອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 40.

ພົນລະເມືອງລາວ ມີສິດເສລີພາບໃນການຕັ້ງພູມລຳເນົາ ແລະໃນການໄປມາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 41(ໃໝ່).

ພົນລະເມືອງລາວ ມີສິດຮ້ອງທຸກ, ຮ້ອງຟ້ອງ ແລະສະເໜີຄວາມເຫັນຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະຜົນປະໂຫຍດລວມ ຫລືສິດ ແລະຜົນປະໂຫຍດສະ ເພາະຂອງຕົນ.

ຄຳຮ້ອງທຸກ, ຄຳຮ້ອງຟ້ອງ ແລະຄວາມເຫັນຂອງພົນລະເມືອງຕ້ອງໄດ້ຮັບການພິຈາລະນາ ແລະແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 42(ໃໝ່).

ພົນລະເມືອງລາວມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຮ່າງກາຍ, ກຽດສັກສີ ແລະເຄຫະສະຖານ. ພົນລະເມືອງລາວຈະບໍ່ຖືກຈັບຕົວ ຫລືກວດຄົ້ນເຄຫະສະຖານ ຖ້າຫາກບໍ່ມີຄຳສັ່ງຂອງໄອຍະການ ຫລືສານປະຊາຊົນ ເວັ້ນເສຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 43.

ພົນລະເມືອງລາວ ມີສິດເສລີພາບໃນການເຊື່ອຖື ຫລືບໍ່ເຊື່ອຖືສາສະໜາ.

ມາດຕາ 44.

ພົນລະເມືອງລາວ ມີສິດເສລີພາບໃນການປາກເວົ້າ, ຂີດຂຽນ, ໂຮມຊຸມນຸມ, ຈັດຕັ້ງ ສະມາຄົມ ແລະເດີນຂະບວນ ທີ່ບໍ່ຂັດກັບລະບຽບກົດໝາຍ.

**ມາດຕາ 45.**

ພົນລະເມືອງລາວມີສິດເສລີພາບໃນການຄົ້ນຄວ້າ ແລະນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກນິກ ແລະເຕັກໂນໂລຢີ, ປະດິດສ້າງສິນລະປະວັນນະຄະດີ ແລະດຳເນີນການເຄື່ອນໄຫວວັດທະນະທຳ ທີ່ບໍ່ຂັດກັບລະບຽບກົດໝາຍ.

**ມາດຕາ 46.**

ລັດປົກປ້ອງສິດ ແລະຜົນປະໂຫຍດອັນຖືກກົດໝາຍຂອງພົນລະເມືອງລາວທີ່ຢູ່ຕ່າງປະເທດ.

**ມາດຕາ 47.**

ພົນລະເມືອງລາວ ມີພັນທະເຄົາລົບລັດຖະທຳມະນູນ ແລະກົດໝາຍ, ປະຕິບັດລະ ບຽບການອອກແຮງງານ, ລະບຽບການດຳລົງຊີວິດຂອງສັງຄົມ ແລະຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ.

**ມາດຕາ 48.**

ພົນລະເມືອງລາວມີພັນທະເສຍພາສີ ແລະສ່ວຍສາອາກອນຕາມລະບຽບກົດໝາຍ.

**ມາດຕາ 49.**

ພົນລະເມືອງລາວ ມີພັນທະປົກປັກຮັກສາປະເທດຊາດ ແລະປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50.**

ຊາວຕ່າງດ້າວ ແລະຜູ້ບໍ່ມີສັນຊາດ ກໍມີສິດໄດ້ຮັບການປົກປ້ອງສິດ ແລະເສລີພາບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີສິດຮ້ອງຟ້ອງຕໍ່ສານ ແລະອົງການທີ່ກ່ຽວຂ້ອງຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມີພັນ ທະເຄົາລົບລັດຖະທຳມະນູນ ແລະກົດໝາຍ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 51.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອະນຸຍາດການລີ້ໄພໃຫ້ແກ່ຄົນຕ່າງປະເທດ ທີ່ຖືກປາບປາມຍ້ອນໄດ້ທຳການຕໍ່ສູ້ເພື່ອອິດສະລະພາບ, ຄວາມເປັນທຳ, ສັນຕິພາບ ແລະພາລະກິດວິທະຍາສາດ.

## ໝວດທີ V ສະພາແຫ່ງຊາດ

**ມາດຕາ 52(ໃໝ່).**

ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດອຳນາດ ແລະຜົນປະໂຫຍດ ຂອງປະຊາຊົນບັນດາເຜົ່າ, ເປັນອົງການອຳນາດແຫ່ງລັດ ແລະທັງເປັນອົງການນິຕິບັນຍັດ ທີ່ມີສິດຕົກລົງບັນຫາພື້ນຖານຂອງປະເທດຊາດ, ຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ.

**ມາດຕາ 53 (ໃໝ່).**

ສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ສ້າງ, ຮັບຮອງເອົາ ຫລືປັບປຸງແປງລັດຖະທຳມະນູນ.
2. ພິຈາລະນາ, ຮັບຮອງເອົາ, ປັບປຸງແປງ ຫລື ລົບລ້າງກົດໝາຍ.
3. ພິຈາລະນາຮັບຮອງເອົາການກຳນົດ, ການປັບປຸງແປງ ຫລື ລົບລ້າງພາສີ ແລະສ່ວຍສາອາກອນ.
4. ພິຈາລະນາ, ຮັບຮອງເອົາແຜນຍຸດທະສາດແຫ່ງການພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ.
5. ເລືອກຕັ້ງ ຫລືປົດຕຳແໜ່ງປະທານ, ຮອງປະທານ ແລະກຳມະການຄະນະປະຈຳ ສະ ພາແຫ່ງຊາດ.
6. ເລືອກຕັ້ງ ຫລືປົດຕຳແໜ່ງປະທານປະເທດ ແລະຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.
7. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ຫລືປົດຕຳແໜ່ງນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ, ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງ, ການຍົກຍ້າຍ ຫລືການປົດຕຳແໜ່ງສະມາຊິກລັດຖະບານ ຕາມການສະເໜີຂອງນາຍົກລັດຖະມົນຕີ.
8. ເລືອກຕັ້ງ ຫລື ປົດຕຳແໜ່ງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງປະທານປະເທດ.
9. ຕົກລົງສ້າງຕັ້ງ ຫລືຍຸບເລີກກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະນະຄອນ, ຕົກລົງເຂດແດນຂອງແຂວງ ແລະນະຄອນ ຕາມການສະເໜີຂອງນາຍົກລັດຖະມົນຕີ.
10. ຕົກລົງໃຫ້ນິລະໂທດກຳ.
11. ຕົກລົງໃຫ້ສັດຕະຍາບັນ ຫລື ລົບລ້າງສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດຕາມກົດໝາຍ.
12. ຕົກລົງບັນຫາສົງຄາມ ຫລືສັນຕິພາບ.
13. ຕິດຕາມກວດກາການເຄົາລົບ ແລະປະຕິບັດລັດຖະທຳມະນູນ ແລະກົດໝາຍ.
14. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54(ໃໝ່).**

ສະພາແຫ່ງຊາດ ແຕ່ລະຊຸດມີອາຍຸການຫ້າປີ.

ສະມາຊິກສະພາແຫ່ງຊາດ ແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງ ຕາມລະບຽບການທີ່ໄດ້ກຳນົດໄວ້ໃນກົດໝາຍ.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຕ້ອງໃຫ້ແລ້ວຢ່າງຊ້າຫົກສິບວັນ ກ່ອນສະ ພາແຫ່ງຊາດຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີທີ່ເກີດສົງຄາມ ຫລືດ້ວຍສາຍເຫດອື່ນ ຊຶ່ງກໍ່ຄວາມຫຍຸ້ງຍາກໃຫ້ແກ່ການເລືອກຕັ້ງນັ້ນ ສະພາແຫ່ງຊາດອາດຈະຕໍ່ອາຍຸການຂອງຕົນກໍໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນຫົກເດືອນ ພາຍຫລັງສະພາບການໄດ້ກັບຄືນສູ່ປົກກະຕິ.

ໃນກໍລະນີທີ່ມີຄວາມຈຳເປັນ ສະພາແຫ່ງຊາດຈະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນການໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຢ່າງໜ້ອຍສອງສ່ວນສາມຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 55.**

ສະພາແຫ່ງຊາດເລືອກຕັ້ງຄະນະປະຈຳຂອງຕົນ ຊຶ່ງປະກອບດ້ວຍປະທານ, ຮອງປະທານ ແລະກຳມະການຈຳນວນໜຶ່ງ.

ປະທານ ແລະຮອງປະທານສະພາແຫ່ງຊາດ ເປັນທັງປະທານ ແລະຮອງປະທານຄະນະປະ ຈຳສະພາແຫ່ງຊາດ.

**ມາດຕາ 56(ໃໝ່).**

ຄະນະປະຈຳສະພາແຫ່ງຊາດ ແມ່ນອົງການປະຈຳການຂອງສະພາແຫ່ງຊາດ, ປະຕິບັດໜ້າທີ່ແທນສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ.

ຄະນະປະຈຳສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ກະກຽມກອງປະຊຸມສະພາແຫ່ງຊາດ ແລະຮັບປະກັນໃຫ້ສະພາແຫ່ງຊາດປະຕິບັດແຜນ ການທີ່ໄດ້ກຳນົດໄວ້.
2. ຕີຄວາມໝາຍ ແລະອະທິບາຍລັດຖະທຳມະນູນ ແລະກົດໝາຍຕ່າງໆ.
3. ຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການ ໄອຍະການປະຊາຊົນ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ.
4. ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງຜູ້ພິພາກສາຂອງສານປະຊາຊົນທຸກຂັ້ນ ແລະຜູ້ພິພາກສາຂອງສານທະຫານ.
5. ຮຽກໂຮມກອງປະຊຸມສະພາແຫ່ງຊາດ.

6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57.**

ສະພາແຫ່ງຊາດເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ ໂດຍແມ່ນຄະນະປະ ຈຳສະພາແຫ່ງຊາດເປັນຜູ້ຮຽກໂຮມ.

ຄະນະປະຈຳສະພາແຫ່ງຊາດ ອາດຈະຮຽກໂຮມກອງປະຊຸມສະໄໝວິສາມັນກໍໄດ້ ຖ້າຫາກເຫັນວ່າມີຄວາມຈຳເປັນ.

**ມາດຕາ 58.**

ກອງປະຊຸມສະພາແຫ່ງຊາດຈະດຳເນີນໄດ້ ກໍຕໍ່ເມື່ອຫາກມີສະມາຊິກສະພາແຫ່ງ ຊາດເຂົ້າຮ່ວມຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ.

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 54, 66 ແລະມາດຕາ 97 ຂອງລັດຖະທຳມະນູນ.

**ມາດຕາ 59 (ໃໝ່).**

ອົງການຈັດຕັ້ງ ແລະບຸກຄົນທີ່ມີສິດສະເໜີສ້າງຮ່າງກົດໝາຍມີດັ່ງນີ້:

1. ປະທານປະເທດ.
2. ຄະນະປະຈຳສະພາແຫ່ງຊາດ.
3. ລັດຖະບານ.
4. ສານປະຊາຊົນສູງສຸດ.
5. ອົງການໄອຍະການປະຊາຊົນສູງສຸດ.
6. ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.

**ມາດຕາ 60.**

ກົດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວນັ້ນ ຕ້ອງໄດ້ປະກາດໃຊ້ໂດຍປະ ທານປະເທດຢ່າງຊ້າບໍ່ໃຫ້ເກີນສາມສິບວັນ ນັບແຕ່ວັນໄດ້ຮັບຮອງເປັນຕົ້ນໄປ. ໃນໄລຍະເວລາດັ່ງກ່າວນັ້ນ ປະທານປະເທດມີສິດສະເໜີໃຫ້ສະພາແຫ່ງຊາດພິຈາລະນາຄືນໃໝ່. ກົດໝາຍທີ່ໄດ້ນຳອອກພິຈາລະນາຄືນໃໝ່ນັ້ນ ຖ້າວ່າສະພາແຫ່ງຊາດຫາກຍັງຕົກລົງຢັ້ງຢືນເອົາຕາມເດີມແລ້ວ ປະ ທານປະເທດກໍຕ້ອງປະກາດໃຊ້ພາຍໃນກຳນົດສິບຫ້າວັນ.

**ມາດຕາ 61.**

ບັນດາບັນຫາທີ່ກ່ຽວພັນເຖິງຊາຕາກຳຂອງປະເທດຊາດ ແລະ ຜົນປະໂຫຍດອັນໃຫຍ່ ຫລວງຂອງປະຊາຊົນ ຕ້ອງຜ່ານສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ.

**ມາດຕາ 62(ໃໝ່).**

ສະພາແຫ່ງຊາດສ້າງຕັ້ງບັນດາກຳມາທິການຂອງຕົນ ຊຶ່ງມີໜ້າທີ່ພິຈາລະນາຮ່າງກົດໝາຍ ແລະຮ່າງລັດຖະບັນຍັດ ແລ້ວນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ແລະປະ ທານປະເທດ ພ້ອມທັງຊ່ວຍສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດປະຕິບັດສິດກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ.

**ມາດຕາ 63(ໃໝ່).**

ສະມາຊິກສະພາແຫ່ງຊາດມີສິດຊັກຖາມນາຍົກລັດຖະມົນຕີ ຫລືສະມາຊິກລັດ ຖະບານ, ປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ. ບຸກຄົນທີ່ຖືກຊັກຖາມນັ້ນ ຕ້ອງຊີ້ແຈງຕໍ່ກອງປະຊຸມສະພາແຫ່ງຊາດດ້ວຍວາຈາ ຫລືເປັນລາຍລັກອັກສອນ.

**ມາດຕາ 64.**

ສະມາຊິກສະພາແຫ່ງຊາດ ຈະບໍ່ຖືກດຳເນີນຄະດີ ຫລືກັກຂັງ ຖ້າຫາກບໍ່ໄດ້ຮັບຄວາມ ເຫັນດີຂອງສະພາແຫ່ງຊາດ ຫລືຂອງຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ.

ໃນກໍລະນີທີ່ມີການກະທຳຜິດເຊິ່ງໜ້າ ຫລືຮີບດ່ວນນັ້ນ ອົງການທີ່ກັກຂັງສະມາຊິກສະພາແຫ່ງຊາດ ຕ້ອງລາຍງານທັນທີໃຫ້ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດໃນເວລາທີ່ສະ ພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ ເພື່ອພິຈາລະນາຕົກລົງ. ການສືບສວນ-ສອບສວນບໍ່ເປັນສາຍ ເຫດພາໃຫ້ສະມາຊິກສະພາແຫ່ງຊາດທີ່ຖືກດຳເນີນຄະດີນັ້ນ ຂາດປະຊຸມສະພາແຫ່ງຊາດ.

## ໝວດທີ VI ປະທານປະເທດ

**ມາດຕາ 65.**

ປະທານປະເທດ ເປັນປະມຸກລັດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເປັນຜູ້ຕາງໜ້າໃຫ້ປະຊາຊົນລາວບັນດາເຜົ່າ ທັງຢູ່ພາຍໃນ ແລະຕໍ່ຕ່າງປະເທດ.

**ມາດຕາ 66(ໃໝ່).**

ປະທານປະເທດ ແມ່ນສະພາແຫ່ງຊາດ ເປັນຜູ້ເລືອກຕັ້ງໂດຍໄດ້ຮັບຄະແນນສຽງ ຢ່າງຫນ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ.

ປະທານປະເທດມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

**ມາດຕາ 67(ໃໝ່).**

ປະທານປະເທດ ມີສິດ ແລະໜ້າທີ່ດັ່ງນີ້:

1. ປະກາດໃຊ້ລັດຖະທຳມະນູນ ແລະກົດໝາຍ ທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ.
2. ອອກລັດຖະບັນຍັດ ແລະລັດຖະດຳລັດ.
3. ສະເໜີການແຕ່ງຕັ້ງ ຫລືປົດຕຳແໜ່ງນາຍົກລັດຖະມົນຕີຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງ.
4. ແຕ່ງຕັ້ງ ຫລືປົດຕຳແໜ່ງນາຍົກລັດຖະມົນຕີ, ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງສະ ມາຊິກລັດຖະບານ ພາຍຫລັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.
5. ແຕ່ງຕັ້ງ ຫລື ປົດຕຳແໜ່ງຮອງປະທານສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ, ແຕ່ງຕັ້ງ ຫລື ປົດຕຳແໜ່ງຮອງໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງໄອຍະການປະຊາຊົນສູງສຸດ.
6. ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແຫນ່ງເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີ ຂອງນາຍົກລັດຖະມົນຕີ.
7. ເປັນແມ່ທັບກຳລັງປະກອບອາວຸດປະຊາຊົນ.
8. ຕົກລົງເລື່ອນຊັ້ນ ຫລືປົດຊັ້ນນາຍພົນຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມການສະເໜີຂອງນາຍົກລັດຖະມົນຕີ.
9. ຮຽກໂຮມ ແລະເປັນປະທານກອງປະຊຸມພິເສດຂອງລັດຖະບານ.
10. ຕົກລົງປະດັບຫລຽນຄຳແຫ່ງຊາດ, ຫລຽນກຽດຕິຄຸນ, ຫລຽນໄຊ ແລະນາມມະຍົດສູງສຸດແຫ່ງລັດ.
11. ຕົກລົງການໃຫ້ອະໄພຍະໂທດ.
12. ຕົກລົງການລະດົມພົນທົ່ວໄປ ຫລືເປັນພາກສ່ວນ, ຕົກລົງພາວະສຸກເສີນໃນທົ່ວປະເທດ ຫລືໃນທ້ອງຖິ່ນໃດໜຶ່ງ.
13. ປະກາດການໃຫ້ສັດຕະຍາບັນ ຫລືການລົບລ້າງສົນທິສັນຍາ ແລະສັນຍາທີ່ໄດ້ເຊັນກັບຕ່າງປະເທດ.
14. ແຕ່ງຕັ້ງຜູ້ຕາງໜ້າທີ່ມີອຳນາດເຕັມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ໄປປະຈຳຢູ່ຕ່າງປະເທດ ຫລືຮຽກກັບຄືນປະເທດ ຕາມການສະເໜີຂອງນາຍົກລັດ ຖະມົນຕີ, ຮັບຮອງເອົາຜູ້ຕາງໜ້າທີ່ມີອຳນາດເຕັມຂອງຕ່າງປະເທດ ທີ່ມາປະຈຳຢູ່ສາ ທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
15. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68(ໃໝ່).**

ປະທານປະເທດມີຮອງປະທານປະເທດ ຊຶ່ງແມ່ນສະພາແຫ່ງຊາດ ເປັນຜູ້ເລືອກຕັ້ງ ໂດຍໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າ ຮ່ວມກອງປະຊຸມ.

ຮອງປະທານປະເທດ ປະຕິບັດໜ້າທີ່ຕາມການມອບໝາຍ ຂອງປະທານປະເທດ ແລະຕາງໜ້າໃຫ້ປະທານປະເທດໃນເວລາປະທານປະເທດຕິດຂັດ.

## ໝວດທີ VII ລັດຖະບານ

**ມາດຕາ 69 .**

ລັດຖະບານ ແມ່ນອົງການບໍລິຫານແຫ່ງລັດ.

ລັດຖະບານ ຄຸ້ມຄອງຢ່າງເປັນເອກະພາບການປະຕິບັດໜ້າທີ່ຂອງລັດໃນທຸກດ້ານ: ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະການຕ່າງປະເທດ.

**ມາດຕາ 70 (ໃໝ່).**

ລັດຖະບານມີສິດ ແລະໜ້າທີ່ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ.
2. ສະເໜີຮ່າງກົດໝາຍ ແລະຮ່າງລັດຖະບັນຍັດຕໍ່ສະພາແຫ່ງຊາດ, ຮ່າງລັດຖະດຳລັດຕໍ່ປະທານປະເທດ.
3. ກຳນົດແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດປະຈຳປີ ແລ້ວນຳສະເໜີໃຫ້ສະພາແຫ່ງຊາດພິຈາລະນາ ແລະຮັບຮອງເອົາ.
4. ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ສະພາແຫ່ງຊາດ, ຕໍ່ຄະນະປະຈຳສະພາ ແຫ່ງຊາດ (ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ) ແລະລາຍງານຕໍ່ປະທານ ປະເທດ.
5. ອອກດຳລັດ, ມະຕິຕົກລົງ ກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຢີ, ຊັບພະຍາກອນແຫ່ງຊາດ, ສິ່ງແວດລ້ອມ, ການປ້ອງກັນຊາດ -ປ້ອງກັນຄວາມສະຫງົບ ແລະການຕ່າງປະເທດ.
6. ຈັດຕັ້ງ, ຊີ້ນຳ ແລະກວດກາການເຄື່ອນໄຫວຂອງບັນດາຂະແໜງການ ແລະອົງການປົກຄອງທ້ອງຖິ່ນ.
7. ຈັດຕັ້ງ ແລະກວດກາການເຄື່ອນໄຫວຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
8. ເຊັນສົນທິສັນຍາ, ສັນຍາກັບຕ່າງປະເທດ ແລະຊີ້ນຳການປະຕິບັດສົນທິສັນຍາ ແລະສັນຍາທີ່ໄດ້ເຊັນແລ້ວ.
9. ງົດການປະຕິບັດ, ລົບລ້າງ ຫລືຍົກເລີກຂໍ້ຕົກລົງ, ຄຳສັ່ງຂອງກະຊວງ, ອົງການທຽບເທົ່າ ກະຊວງ, ອົງການທີ່ຂຶ້ນກັບລັດຖະບານ ແລະອົງການປົກຄອງທ້ອງຖິ່ນທີ່ຂັດກັບລະບຽບກົດໝາຍ.

10. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 71 (ໃໝ່).**

ລັດຖະບານ ປະກອບດ້ວຍນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດ ຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ.

ລັດຖະບານມີອາຍຸການ ເທົ່າກັບອາຍຸການຂອງສະພາແຫ່ງຊາດ.

**ມາດຕາ 72 (ໃໝ່).**

ນາຍົກລັດຖະມົນຕີ ແມ່ນປະທານປະເທດເປັນຜູ້ແຕ່ງຕັ້ງ ຫລືປົດຕຳແໜ່ງ ພາຍຫລັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.

**ມາດຕາ 73 (ໃໝ່).**

ນາຍົກລັດຖະມົນຕີເປັນຫົວໜ້າລັດຖະບານ ແລະຕາງໜ້າໃຫ້ລັດຖະບານ ຊີ້ ນຳ ແລະອຳນວຍຄວບຄຸມວຽກງານຂອງລັດຖະບານ, ຊີ້ນຳວຽກງານຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ແລະອົງການອື່ນໆ ທີ່ຂຶ້ນກັບລັດຖະບານ, ຊີ້ນຳວຽກງານຂອງແຂວງ ແລະນະ ຄອນ.

ນາຍົກລັດຖະມົນຕີ ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງລັດຖະມົນຕີຊ່ວຍວ່າການ, ຮອງຫົວໜ້າອົງການທຽບເທົ່າກະຊວງ, ຫົວໜ້າທະບວງ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ, ເລື່ອນ ຊັ້ນ ຫລືປົດຊັ້ນພັນເອກຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະຕຳແໜ່ງອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ບັນດາຮອງນາຍົກລັດຖະມົນຕີ ເປັນຜູ້ຊ່ວຍວຽກນາຍົກລັດຖະມົນຕີ ແລະຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງນາຍົກລັດຖະມົນຕີ. ເມື່ອນາຍົກລັດຖະມົນຕີຕິດຂັດ ແມ່ນຮອງນາຍົກລັດຖະມົນຕີຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ວ່າການແທນ.

**ມາດຕາ 74(ໃໝ່).**

ລັດຖະບານ ຫລືສະມາຊິກລັດຖະບານທ່ານໃດທ່ານໜຶ່ງ ອາດຈະຖືກສະ ພາແຫ່ງຊາດພິຈາລະນາ ແລະລົງມະຕິບໍ່ໄວ້ວາງໃຈ ຖ້າວ່າຄະນະປະຈຳສະພາແຫ່ງຊາດ ຫລືມີຢ່າງ ໜ້ອຍ ໜຶ່ງສ່ວນສີ່ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດຫາກສະເໜີບັນຫານີ້ຂຶ້ນ.

ໃນໄລຍະເວລາຊາວສີ່ຊົ່ວໂມງ ພາຍຫລັງທີ່ສະພາແຫ່ງຊາດ ໄດ້ລົງມະຕິບໍ່ໄວ້ວາງໃຈແລ້ວ ປະທານປະເທດມີສິດສະເໜີໃຫ້ສະພາແຫ່ງຊາດພິຈາລະນາຄືນໃໝ່. ການພິຈາລະນາເທື່ອທີສອງຕ້ອງຫ່າງຈາກການພິຈາລະນາເທື່ອທີໜຶ່ງສີ່ສິບແປດຊົ່ວໂມງ. ຖ້າວ່າການລົງມະຕິເທື່ອໃໝ່ຫາກບໍ່ໄດ້ຮັບຄວາມໄວ້ວາງໃຈອີກແລ້ວ ລັດຖະບານ ຫລືສະມາຊິກລັດຖະບານທ່ານນັ້ນຕ້ອງລາອອກ.

## ໝວດທີ VIII ການປົກຄອງທ້ອງຖິ່ນ

**ມາດຕາ 75 (ໃໝ່).**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງການປົກຄອງທ້ອງຖິ່ນ ອອກເປັນສາມຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະຂັ້ນບ້ານ.

ຂັ້ນແຂວງ ມີແຂວງ ແລະນະຄອນ.

ຂັ້ນເມືອງ ມີເມືອງ ແລະເທດສະບານ.

ຂັ້ນບ້ານ ມີບ້ານ.

ແຂວງ ມີເຈົ້າແຂວງ, ນະຄອນ ມີເຈົ້າຄອງນະຄອນ, ເມືອງ ມີເຈົ້າເມືອງ, ເທດສະບານ ມີຫົວໜ້າເທດສະບານ, ບ້ານ ມີນາຍບ້ານ.

ເຈົ້າແຂວງ ມີຮອງເຈົ້າແຂວງ, ເຈົ້າຄອງນະຄອນ ມີຮອງເຈົ້າຄອງນະຄອນ, ເຈົ້າເມືອງມີ ຮອງເຈົ້າເມືອງ, ຫົວໜ້າເທດສະບານ ມີຮອງຫົວໜ້າເທດສະບານ, ນາຍບ້ານ ມີຮອງນາຍບ້ານ ເປັນຜູ້ຊ່ວຍວຽກ.

ໃນກໍລະນີທີ່ຈຳເປັນອາດຈະສ້າງຕັ້ງເຂດພິເສດຂຶ້ນ ຕາມການຕົກລົງຂອງສະພາແຫ່ງຊາດ. ເຂດພິເສດ ມີຖານະທຽບເທົ່າກັບແຂວງ.

**ມາດຕາ 76(ໃໝ່).**

ເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງມີສິດ ແລະໜ້າທີ່ລວມດັ່ງນີ້:

1. ຮັບປະກັນການປະຕິບັດລັດຖະທຳມະນູນ ແລະກົດໝາຍ, ຈັດຕັ້ງປະຕິບັດທຸກມະຕິຄຳສັ່ງທີ່ຂັ້ນເທິງວາງອອກຢ່າງເຂັ້ມງວດ.
2. ຊີ້ນຳ ແລະກວດກາການເຄື່ອນໄຫວຂອງທຸກຂະແໜງການ, ທຸກຂັ້ນ ທີ່ຂຶ້ນກັບຂອບເຂດຄວາມຮັບຜິດຊອບຂອງຕົນ.
3. ງົດການປະຕິບັດ, ລົບລ້າງ ຫລືຍົກເລີກຂໍ້ຕົກລົງຂອງທຸກຂະແໜງການ ທີ່ຢູ່ຂັ້ນຂອງຕົນ ຫລືຂັ້ນລຸ່ມ ທີ່ຂັດກັບລະບຽບກົດໝາຍ.
4. ຄຸ້ມຄອງພົນລະເມືອງ, ພິຈາລະນາ ແລະແກ້ໄຂຄຳຮ້ອງທຸກ ແລະຄຳສະເໜີຂອງປະຊາ ຊົນ ຢູ່ໃນຂອບເຂດສິດອຳນາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.
5. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77(ໃໝ່).**

ຫົວໜ້າເທດສະບານມີສິດ ແລະຫນ້າທີ່ໃນການວາງແຜນການ, ຈັດຕັ້ງປະຕິບັດ ແລະຄຸ້ມຄອງການພັດທະນາຕົວເມືອງ, ບໍລິການສາທາລະນະໃຫ້ທົ່ວເຖິງ, ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ ແລະສວຍງາມ ໃນຂອບເຂດຕົວເມືອງ ຕາມທີ່ໄດ້ກຳນົດໄວ້ໃນຜັງເມືອງ, ປະຕິ ບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 78.**

ນາຍບ້ານມີຄວາມຮັບຜິດຊອບຈັດຕັ້ງປະຕິບັດລະບຽບກົດໝາຍ ແລະມະຕິຄຳສັ່ງຂອງລັດ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງບ້ານ ແລະພັດທະນາບ້ານໃຫ້ມີຄວາມໜັກແໜ້ນໃນທຸກດ້ານ.

## ໝວດທີ IX ສານປະຊາຊົນ ແລະອົງການໄອຍະການປະຊາຊົນ

**ມາດຕາ 79 (ໃໝ່).**

ສານປະຊາຊົນແມ່ນອົງການພິພາກສາຂອງລັດ ຊຶ່ງປະກອບດ້ວຍ:

ສານປະຊາຊົນສູງສຸດ.

ສານອຸທອນ.

ສານປະຊາຊົນແຂວງ, ນະຄອນ.

ສານປະຊາຊົນເມືອງ.

ສານທະຫານ.

ໃນກໍລະນີທີ່ຈຳເປັນ ອາດຈະສ້າງຕັ້ງສານສະເພາະ ຕາມຂະແໜງການຂຶ້ນກໍໄດ້ ໂດຍການຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 80(ໃໝ່).**

ສານປະຊາຊົນສູງສຸດ ແມ່ນອົງການພິພາກສາສູງສຸດຂອງລັດ.

ສານປະຊາຊົນສູງສຸດ ຄຸ້ມຄອງດ້ານບໍລິຫານຕໍ່ສານປະຊາຊົນທຸກຂັ້ນ, ສານທະຫານ ແລະ ກວດກາຄຳຕັດສິນຂອງສານດັ່ງກ່າວ.

**ມາດຕາ 81(ໃໝ່).**

ຮອງປະທານສານປະຊາຊົນສູງສຸດ ແມ່ນປະທານປະເທດເປັນຜູ້ແຕ່ງຕັ້ງ ຫລື ປົດຕຳແໜ່ງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ບັນດາຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ, ບັນດາຜູ້ພິພາກສາຂອງສານອຸທອນ, ປະທານ, ຮອງປະທານ ແລະບັນດາຜູ້ພິພາກສາຂອງສານປະຊາຊົນແຂວງ, ນະ ຄອນ, ເມືອງ, ຫົວໜ້າ, ຮອງຫົວໜ້າ ແລະບັນດາຜູ້ພິພາກສາຂອງສານທະຫານ ແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

**ມາດຕາ 82.**

ສານປະຊາຊົນພິຈາລະນາຕັດສິນເປັນໝູ່ຄະນະ. ໃນເວລາພິຈາລະນາຕັດສິນ ຜູ້ພິ ພາກສາຕ້ອງເປັນເອກະລາດ ແລະມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ.

**ມາດຕາ 83.**

ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ. ຜູ້ຖືກຫາມີສິດຕໍ່ສູ້ຄະດີທີ່ຕົນຖືກກ່າວຟ້ອງ, ທະນາຍຄວາມມີສິດຊ່ວຍເຫລືອທາງດ້ານກົດໝາຍແກ່ຜູ້ຖືກກ່າວຟ້ອງ.

**ມາດຕາ 84.**

ຜູ້ຕາງໜ້າບັນດາອົງການຈັດຕັ້ງສັງຄົມ ມີສິດເຂົ້າຮ່ວມໃນການດຳເນີນຄະດີຢູ່ສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 85(ໃໝ່).**

ຄຳຕັດສິນຂອງສານປະຊາຊົນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດ ຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະພົນລະເມືອງທຸກຄົນ ຕ້ອງເຄົາລົບ, ບຸກຄົນ ແລະອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິ ບັດຢ່າງເຂັ້ມງວດ.

**ມາດຕາ 86(ໃໝ່).**

ອົງການໄອຍະການປະຊາຊົນ ແມ່ນອົງການຕິດຕາມກວດກາການປະຕິບັດກົດ ຫມາຍ ຊຶ່ງປະກອບດ້ວຍ:

ອົງການໄອຍະການປະຊາຊົນສູງສຸດ.

ອົງການໄອຍະການປະຊາຊົນຂັ້ນອຸທອນ.

ອົງການໄອຍະການປະຊາຊົນແຂວງ, ນະຄອນ.

ອົງການໄອຍະການປະຊາຊົນເມືອງ.

ອົງການໄອຍະການທະຫານ.

ອົງການໄອຍະການປະຊາຊົນມີສິດ ແລະໜ້າທີ່ດັ່ງນີ້:

1. ຕິດຕາມກວດກາການເຄົາລົບລະບຽບກົດໝາຍຢ່າງຖືກຕ້ອງ ແລະເປັນເອກະພາບຢູ່ໃນ ທຸກກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາ ຫະກິດ, ລັດຖະກອນ ແລະພົນລະເມືອງ.
2. ປະຕິບັດສິດກ່າວຟ້ອງ.

**ມາດຕາ 87(ໃໝ່).**

ໄອຍະການປະຊາຊົນສູງສຸດ ຊີ້ນຳການເຄື່ອນໄຫວຂອງອົງການໄອຍະການປະ ຊາຊົນທຸກຂັ້ນ.

ຮອງໄອຍະການປະຊາຊົນສູງສຸດ ແມ່ນປະທານປະເທດເປັນຜູ້ແຕ່ງຕັ້ງ ຫລືປົດຕຳແໜ່ງຕາມການສະເໜີຂອງ ໄອຍະການປະຊາຊົນສູງສຸດ.

ໄອຍະການປະຊາຊົນ ແລະຮອງໄອຍະການປະຊາຊົນຂັ້ນອຸທອນ, ແຂວງ, ນະຄອນ, ເມືອງ, ໄອຍະການທະຫານ ແມ່ນໄອຍະການປະຊາຊົນສູງສຸດ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງ.

**ມາດຕາ 88(ໃໝ່).**

ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ໄອຍະການປະຊາຊົນມີແຕ່ປະຕິບັດຕາມ ກົດໝາຍ ແລະຄຳສັ່ງຂອງໄອຍະການປະຊາຊົນສູງສຸດເທົ່ານັ້ນ.

## ໝວດທີ X ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ , ວັນຊາດ, ສະກຸນເງິນ ແລະນະຄອນຫລວງ

**ມາດຕາ 89.**

ພາສາ ແລະອັກສອນລາວເປັນພາສາ ແລະອັກສອນທີ່ໃຊ້ເປັນທາງການ.

**ມາດຕາ 90.**

ເຄື່ອງໝາຍຊາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຮູບວົງມົນ ດ້ານລຸ່ມມີຮູບເຄິ່ງກົງຈັກເປັນແຂ້ວ ແລະໂບສີແດງຂຽນອັກສອນ " ສາທາລະນະລັດ ປະຊາທິ ປະໄຕ ປະຊາຊົນລາວ ", ສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນຮູບເຟື້ອງພະຈັນ ແລະໂບສີແດງຂຽນອັກສອນ " ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ ", ລະຫວ່າງກາງ ຂອງສອງປາຍຮວງເຂົ້າມີຮູບທາດຫລວງ, ຢູ່ກາງຮູບວົງມົນມີທົນທາງ, ທົ່ງນາ, ປ່າໄມ້ ແລະເຂື່ອນໄຟຟ້ານ້ຳຕົກ.

**ມາດຕາ 91.**

ທຸງຊາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນທຸງພື້ນສີຄາມ, ແຂບສີແດງ ແລະວົງເດືອນສີຂາວຢູ່ເຄິ່ງກາງຂອງທຸງຊາດ. ລວງກວ້າງຂອງທຸງເທົ່າກັບສອງສ່ວນ ສາມຂອງລວງຍາວ, ລວງກວ້າງຂອງແຂບສີແດງແຕ່ລະເບື້ອງເທົ່າກັບເຄິ່ງໜຶ່ງຂອງລວງກວ້າງແຂບສີຄາມ ແລະວົງເດືອນສີຂາວ ກວ້າງເທົ່າກັບສີ່ສ່ວນຫ້າຂອງລວງກວ້າງແຂບສີຄາມ.

**ມາດຕາ 92.**

ເພງຊາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເພງທີ່ມີຊື່ວ່າ "ຊາດລາວ".

**ມາດຕາ 93(ໃໝ່).**

ວັນຊາດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄື: ວັນທີ 2 ເດືອນ ທັນວາ ປີ 1975.

**ມາດຕາ 94(ໃໝ່).**

ສະກຸນເງິນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເງິນກີບ.

**ມາດຕາ 95.**

ນະຄອນຫລວງຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນນະຄອນຫລວງວຽງຈັນ.

## ໝວດທີ XI ບົດບັນຍັດສຸດທ້າຍ

**ມາດຕາ 96(ໃໝ່).**

ລັດຖະທຳມະນູນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນກົດໝາຍພື້ນຖານຂອງຊາດ. ທຸກກົດໝາຍຕ້ອງໃຫ້ສອດຄ່ອງກັບລັດຖະທຳມະນູນ.

**ມາດຕາ 97.**

ມີແຕ່ກອງປະຊຸມສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວເທົ່ານັ້ນ ຈຶ່ງມີສິດປ່ຽນແປງລັດຖະທຳມະນູນ.

ໃນການປ່ຽນແປງລັດຖະທຳມະນູນ ຕ້ອງມີສະມາຊິກສະພາແຫ່ງຊາດ ຢ່າງໜ້ອຍສອງສ່ວນສາມຂອງຈຳນວນສະມາຊິກທັງໝົດ ເປັນຜູ້ລົງຄະແນນສຽງເຫັນດີ.

**ມາດຕາ 98 (ໃໝ່).**

ລັດຖະທຳມະນູນສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ວຽງຈັນ, ວັນທີ 6 ພຶດສະພາ 2003

ປະທານສະພາແຫ່ງຊາດ